ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງແນວລາວສ້າງຊາດ
ຄະນະປະຈໍາ

ເລກທີ 770 /ຄປຈ.

ນະຄອນຫຼວງວຽງຈັນ, ວັນທີ 11 / 11 / 2019

# ຂໍ້ຕົກລົງ
## ວ່າດ້ວຍໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງແນວລາວສ້າງຊາດ ແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ

- ອີງຕາມ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ສະບັບເລກທີ 49/ສພຊ, ລົງວັນທີ 20/06/2018;
- ອີງຕາມ ກົດລະບຽບ ຂອງແນວລາວສ້າງຊາດ ສະໄໝທີ X ໝວດທີ IV, ມາດຕາ 19;
- ອີງຕາມ ຄໍາສັ່ງແນະນໍາ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 19 /ຄລສພ, ລົງວັນທີ 30 /06/2015;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 03 /ນຍ, ລົງວັນທີ 9 ກຸມພາ 2018 ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈໍາສູນກາງແນວລາວສ້າງຊາດ ເປີດກວ້າງ ຄັ້ງທີ 4 ສະໄໝທີ X ແລະ ກອງປະຊຸມຄະນະປະຈໍາ ລົງວັນທີ 30-31 ປະຈໍາເດືອນ 10 ປີ 2019.

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ໄດ້ກໍານົດທີ່ຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ ເພື່ອເປັນບ່ອນອີງໃນການກໍານົດຕໍາແໜ່ງງານ ແລະ ການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຕ່າງໆ ໃຫ້ມີປະສິດທິຜົນເປັນຢ່າງດີ, ແນໃສ່ຮັບປະກັນການຈັດຕັ້ງ ແນວລາວສ້າງຊາດ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ປະກອບເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ທີ່ຕັ້ງ**

ແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ ແມ່ນການຈັດຕັ້ງໜຶ່ງໃນລະບົບການເມືອງແຕ່ລະຂັ້ນ, ຂຶ້ນກັບລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ ຊຶ່ງມີຖານະເທົ່າກັບບັນດາພະແນກການ ຂອງແຂວງ-ນະຄອນຫຼວງ, ບັນດາຫ້ອງການ ຂອງເມືອງ-ນະຄອນ, ເທດສະບານ, ສໍາລັບແນວລາວສ້າງຊາດຂັ້ນບ້ານ ມີຖານະເທົ່າກັບອົງການຈັດຕັ້ງອື່ນຂອງບ້ານ.

**ມາດຕາ 3 ພາລະບົດບາດ**

ແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ ປະຕິບັດພາລະບົດບາດ

ຂອງຕົນ ໃນການເຕົ້າໂຮມຄວາມສາມັກຄີປອງດອງ, ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ, ພັດທະນາປະເທດຊາດ ແລະ ປະຕິບັດພາລະບົດບາດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງແນວລາວສ້າງຊາດ.

**ມາດຕາ 4 ຄວາມຮັບຜິດຊອບ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ**

ແນວລາວສ້າງຊາດແຂວງ-ນະຄອນຫຼວງ ມີຄວາມຮັບຜິດຊອບໂດຍກົງ ຕໍ່ໜ້າທີ່ການເມືອງ ແລະ ການຈັດຕັ້ງປະຕິບັດວຽກງານຕ່າງໆຂອງຕົນ ຕາມການມອບໝາຍ ຂອງຄະນະປະຈຳພັກແຂວງ-ນະຄອນຫຼວງ ແລະ ການຈັດຕັ້ງຂັ້ນເທິງຂອງຕົນ ໃນກໍລະນີປະທານແນວລາວສ້າງຊາດບໍ່ຢູ່ ຕ້ອງໄດ້ມອບສິດ, ມອບຄວາມຮັບຜິດຊອບ ໃຫ້ຮອງປະທານແນວລາວສ້າງຊາດ ທ່ານໃດໜຶ່ງ ເປັນຜູ້ປະຈຳການແທນປະທານ.

**ມາດຕາ 5 ຄວາມຮັບຜິດຊອບ ຂອງແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ**

ຄວາມຮັບຜິດຊອບ ຂອງແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ ມີຄວາມຮັບຜິດຊອບໂດຍກົງຕໍ່ໜ້າທີ່ການເມືອງ ແລະ ການຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງຕົນ ຕາມການມອບໝາຍຂອງຄະນະປະຈຳພັກເມືອງ-ນະຄອນ, ເທດສະບານ ແລະ ການຈັດຕັ້ງຂັ້ນເທິງຂອງຕົນ. ໃນກໍລະນີປະທານແນວລາວສ້າງຊາດບໍ່ຢູ່ ຕ້ອງໄດ້ມອບສິດ, ມອບຄວາມຮັບຜິດຊອບ ໃຫ້ຮອງປະທານແນວລາວສ້າງຊາດ ທ່ານໃດໜຶ່ງ ເປັນຜູ້ປະຈຳການແທນປະທານ.

**ມາດຕາ 6 ຄວາມຮັບຜິດຊອບ ຂອງແນວລາວສ້າງຊາດບ້ານ**

ແນວລາວສ້າງຊາດບ້ານ ມີຄວາມຮັບຜິດຊອບໂດຍກົງ ຕໍ່ໜ້າທີ່ການເມືອງ ແລະ ການຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງຕົນ ຕາມການມອບໝາຍ ຂອງຄະນະພັກຮາກຖານ ຫຼື ໜ່ວຍພັກບ້ານ ແລະ ການຈັດຕັ້ງຂັ້ນເທິງຂອງຕົນ. ໃນກໍລະນີປະທານແນວລາວສ້າງຊາດບໍ່ຢູ່ ຕ້ອງໄດ້ມອບສິດ, ມອບຄວາມຮັບຜິດຊອບ ໃຫ້ຮອງປະທານແນວລາວສ້າງຊາດ ທ່ານໃດໜຶ່ງ ເປັນຜູ້ປະຈຳການແທນປະທານ.

## ໝວດທີ II
## ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 7 ໂຄງປະກອບກົງຈັກການຈັດຕັ້ງ (ປັບປຸງ)**

7.1 ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ ມີດັ່ງນີ້:

1. ຂະແໜງບໍລິຫານ-ຈັດຕັ້ງ;
2. ຂະແໜງກວດກາ;
3. ຂະແໜງໂຄສະນາ;
4. ຂະແໜງສາສະໜາ;
5. ຂະແໜງຊົນເຜົ່າ-ຊັ້ນຄົນ-ການຈັດຕັ້ງສັງຄົມ.

7.2 ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ ມີດັ່ງນີ້:

1. ໜ່ວຍງານບໍລິຫານ-ຈັດຕັ້ງ-ໂຄສະນາ;
2. ໜ່ວຍງານກວດກາ;
3. ໜ່ວຍງານສາສະໜາ-ຊົນເຜົ່າ-ຊັ້ນຄົນ-ການຈັດຕັ້ງສັງຄົມ.

7.3 ແນວລາວສ້າງຊາດຂັ້ນບ້ານ ແມ່ນການຈັດຕັ້ງໜຶ່ງຄືກັນກັບບັນດາອົງການຈັດຕັ້ງອື່ນໆ ຂອງບ້ານ, ປະຕິບັດພາລະບົດບາດ ສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປອງດອງປະຊາຊົນບັນດາເຜົ່າ, ສາສະໜາ, ຊັ້ນຄົນ, ການຈັດຕັ້ງສັງຄົມພາຍໃນບ້ານຂອງຕົນ, ຕິດຕາມ ກວດກາ ການເຄື່ອນໄຫວຂອງອົງການປົກຄອງບ້ານ, ເກັບກຳຄຳຄິດເຫັນຂອງປະຊາຊົນ.

ມາດຕາ 8 ໂຄງປະກອບບຸກຄະລາກອນ (ປັບປຸງ)

8.1 ແນວລາວສ້າງຊາດແຂວງ-ນະຄອນຫຼວງ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 2 ຫາ 3 ທ່ານ;
3. ຄະນະປະຈຳແນວລາວສ້າງຊາດ 5-7 ທ່ານ;
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະແຂວງ);
5. ພະນັກງານ - ລັດຖະກອນ 15 ທ່ານຂຶ້ນໄປ (ອີງໃສ່ການຂຽນຕຳແໜ່ງງານຕົວຈິງ)

8.2 ແນວລາວສ້າງຊາດເມືອງ-ນະຄອນ, ເທດສະບານ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 1 ຫາ 2 ທ່ານ;
3. ຄະນະປະຈຳແນວລາວສ້າງຊາດ 3-5 ທ່ານ
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະເມືອງ);
5. ພະນັກງານ - ລັດຖະກອນ 9 ທ່ານຂຶ້ນໄປ (ອີງໃສ່ການຂຽນຕຳແໜ່ງງານຕົວຈິງ).

8.3 ແນວລາວສ້າງຊາດບ້ານ ປະກອບດ້ວຍ:

1. ປະທານ 1 ທ່ານ;
2. ຮອງປະທານ 2 ຫາ 3 ທ່ານ;
3. ກຳມະການຈຳນວນໜຶ່ງ (ອີງໃສ່ຄວາມເໝາະສົມຂອງແຕ່ລະບ້ານ).

8.4 ຈຳນວນພະນັກງານ-ລັດຖະກອນຂັ້ນຂະແໜງ ແລະ ວິຊາການ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແມ່ນໃຫ້ອີງໃສ່ການຂຽນຕຳແໜ່ງງານຕົວຈິງ. ສຳລັບຈຳນວນກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ອີງໃສ່ສະພາບ ຈຸດພິເສດຕົວຈິງ ຂອງແຂວງ-ນະຄອນຫຼວງ; ເມືອງ-ນະຄອນ, ເທດສະບານ ແລະ ບ້ານ, ເຊິ່ງໂຄງປະກອບບຸກຄະລາກອນຂອງກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ປະກອບມີທັງສະມາຊິກພັກ ແລະ ມະຫາຊົນ, ອົງການພາຄີ, ຕົວແທນຊົນເຜົ່າ, ເພດຍິງ, ຜູ້ຊົງຄຸນວຸດທິ, ຊັ້ນຄົນ, ນັກທຸລະກິດ, ສາສະໜາ, ການຈັດຕັ້ງສັງຄົມ, ສາມາຄົມ, ມູນນິທິ. ແນວລາວສ້າງຊາດຂັ້ນບ້ານ ໃຫ້ມີບ່ອນເຮັດວຽກເປັນຂອງຕົນເອງ ສັງກັດຢູ່ຫ້ອງການປົກຄອງບ້ານ ຄືກັນກັບອົງການຈັດຕັ້ງອື່ນ ຂອງອົງການປົກຄອງບ້ານ.

## ໝວດທີ III
## ບົດບັນຍັດສຸດທ້າຍ

ມາດຕາ 9 ການຈັດຕັ້ງປະຕິບັດ

ແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ, ເທດສະບານ ແລະ ບ້ານ ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ພາກສ່ວນຕ່າງໆຂັ້ນຂອງຕົນ ຄົ້ນຄວ້າຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

ມາດຕາ 10 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ຂອງຄະນະປະຈຳສູນກາງແນວລາວສ້າງຊາດ ສະບັບເລກທີ 100 /ຄປຈ, ລົງວັນທີ 28 ມິຖຸນາ 2017.

ຄະນະປະຈຳສູນກາງແນວລາວສ້າງຊາດ

ປະທານ

ປອ ໄຊສົມພອນ ພົມວິຫານ